ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ກົມສິລະປະກຳ

# ເພງລາວ

# LAO SONG

## ສະໄໝການປະຕິວັດຊາດ ປະຊາທິປະໄຕ ແລະ ປົກປັກຮັກສາ ສ້າງສາປະເທດຊາດ

ຊຸດ II



ຜົນງານປະພັນ
ສຸບັນ ສຸວັນນະວົງ


ສັນຕິພາບ ເອກະລາດ ປະຊາທິປະໄຕ
ເອກະພາບ ວັດທະນະຖາວອນ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ





ພະນະທ່ານໄກສອນພົມວິຫານ
ອາດີດປະທານພັກປະຊາຊົນປະຕິວັດລາວ

# ຄຳນຳ

ບັນດາທ່ານ ແລະ ນັກສຶກສາທີ່ຮັກແພງ ແລະ ນັບຖື.

ເນື່ອງໃນໂອກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ປວງຊົນບັນດາເຜົ່າໃນທົ່ວປະເທດ ພວມເບີກບານມ່ວນຊື່ນກະກຽມສະເຫລີມສະຫລອງວັນບຸນໃຫຍ່ຂອງຊາດ ແລະ ຂອງພັກ ຢ່າງຕັ້ງໜ້າ ໂດຍສະເພາະແມ່ນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 50 ປີ, ວັນຊາດ ທີ 2 ທັນວາ ຄົບຮອບ 30 ປີ ແລະ ວັນເກີດທ່ານ ໄກສອນ ພົມວິຫານຄົບຮອບ 85 ປີນີ້ ສະຫາຍ ສຸບັນ ສຸວັນນະວົງ ໄດ້ລວບລວມພິມເພງຮ້ອງລາວລະບອບໃໝ່ຊຸດນີ້ອອກມີຄື: ທ່ານ ອາວຸໂສ, ເຢັນສະບາຍຊາວນາ, ດາວລ້ອມເດືອນ, ເຜົ່າລາວເອີຍ ແລະ ອື່ນໆ...

ຂ້າພະເຈົ້າເຫັນວ່າ: ມີສາລະ ແລະ ຄຸນປະໂຫຍດຫລາຍແກ່ວົງການປະດິດແຕ່ງເພງຮ້ອງຂອງລາວເຮົາ ເພາະວ່າໃນແຕ່ລະບົດເພງຂອງຜູ້ກ່ຽວແຕ່ງມານັ້ນມັນຖືກຕ້ອງກັບ ສະພາບຕົວຈິງ, ຖືກກັບແນວທາງສິລະປະວັດທະນະທຳຊາດກ້າວໜ້າ ໃນລະບອບປະຊາ ທິປະໄຕ ປະຊາຊົນລາວພວກເຮົາ ແລະ ສອດຄ່ອງກັບຄວາມໂອ້ລົມຂອງທ່ານ ໄກສອນ ພົມວິຫານ ທີ່ເຄົາ ລົບຮັກຂອງພວກເຮົາ ໂອ້ລົມຕໍ່ກອງສິລະປະສູນກາງຄັ້ງວັນທີ່ 28/11/1989 ໃນເວລາທີ່ທ່ານສຳພັດມີກັບນັກສະແດງ.

ຊຶ່ງບາງຕອນສຳຄັນທ່ານໄດ້ເວົ້າວ່າ: ຈົ່ງພ້ອມກັນຄົ້ນຄວ້າ, ເສີມຂະຫຍາຍສິລະປະວັດທະນະທຳຂອງຊາດໃຫ້ຈະເລີນກ້າວໜ້າ, ການປະດິດແຕ່ງໃຫ້ມີລັກສະນະຊາດ- ກ້າວໜ້າຫລີກເວັ້ນການປະດິດແຕ່ງ ແລະ ລີລາ ການສະແດງແບບສອດກະຈາທັງເນື້ອ ແລະ ຮູບການ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເຫັນດີນຳຜົນງານ ແລະ ບົດຮຽນປະພັນເພງຂອງ ສຸບັນ ສຸວັນນະວົງ ນັ້ນຈະເປັນແບບຢ່າງອັນດີງາມບໍ່ຫລາຍກໍນ້ອຍໃຫ້ແກ່ສິລະປະວັດທະນະທຳອັນສົດໃສຕາມຈິດໃຈ ຂໍ້ກຳນົດເລກທີ 09 ຂອງສະພາ ລັດຖະມົນຕີ ລົງວັນທີ 18 ກຸມພາ 1985 ເພື່ອປະກອບສ່ວນເຂົ້າໃນການປັບປຸງ ແລະ ບູລະນະລະບອບປະຊາທິປະໄຕ ປະຊາຊົນລາວກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ ໃນປະເທດເຮົາ.

ວຽງຈັນ, ວັນທີ 22/11/2005

ລັດຖະມົນຕີວ່າການ

ກະຊວງຖະແຫຼງຂ່າວ-ວັດທະນະທຳ

ໝູນແກ້ວ ອໍລະບູນ

<u>ສາລະບານ</u>


1. ເພງຊາດລາວ
2. ເຜົ່າລາວເອີຍ
3. ພົບກັນໃນສັນຕິພາບ
4. ເຮືອນອອັມຈອມດອຍ
5. ປະເທດລາວສວຍງາມ
6. ທ່ານ ອາວຸໂສ
7. ລາຕີແນວໜ້າ
8. ແກ້ງກອກດວງໃຈ
9. ຈຳປາສັກຂວັນໃຈ
10. ສະບາຍດີ
11. ສັນຍາຮັກ ນັກສຶກສາ
12. ພວກຫຼານດີໃຈ
13. ນິກນອັຍຮ້ອງເພງ
14. ໝານ້ອຍໜ້າຮັກ
15. ສາຍໃຈປ້ອງກັນຊາດ
16. ອ້າຍຮັກຜູ້ປະເສີດ
17. ຖິ່ນຖານບ້ານເກີດ
18. ຄືນສູ່ອ້ອມອົກແມ່
19. ຜົ້ງສາລີເມືອງເໜືອ
20. ຊຳເໜືອດວງໃຈ ວຽງໄຊແກ້ວຕາ
21. ດອກເອື້ອງເມືອງໄຊສົມບູນ
22. ໂຊກດີປີໃໝ່
23. ຮັກເຜົ່າພັນ
24. ຍັງຮັກ ຍັງເຫັນໃຈ H.I.V
25. ຍາມແລງບົນຍອດພູ
26. ຈຳປາບານ
27. ດາວດວງໃໝ່
28. ນ້ຳໃຈນັກກິລາລາວ
29. ວຽງຈັນມະຫາກຳກິລາ
30. ວິງຄະນະຍາດອາຊຽນ
31. ສາມັກຄີ ລາວ - ຫວຽດນາມ
32. ພະລາທິການ ປ.ກ.ສ
33. ຫຼວງພະບາງຮຸ່ງເຮືອງໃສ
34. ສະຫວັນເມືອງລາວ
35. ສາຍນ້ຳສາຍຊີວິດ
36. ສະບາຍດີ ບໍ່ນອ້ງ
37. ຮັກສາວພູສູງ
38. ເຂົ້າຕາກຳມະການ
39. ກິດເກນທຳມະຊາດ
40. ເຈົ້າຫຼີ້ ຜີ

41. ຄົນຄືຄົນ

42. ຄົນ ຫຼື ຜີ

43. ເບັດຕຶກດາວ

44. ສຽງເພງຈາກຈອມພູເກົ່າ

45. ຊົມເຊີຍລັດຖະທຳມະນູນ

46. ຮ່ວມໃຈໃຊ້ເງິນກີບລາວ

47. ຂອງຕອັນຈາກບ່າວພວນ

48. ຊາດລາວ - ເຜົ່າລາວ

49. ວິທະຍາຄານປອ້ງກັນຄວາມສະຫງົບ

50. ດອນກາງນະທີ

51. ໜຶ່ງໃນອານາຈັກລ້ານຊ້າງ

52. ຄົນດີບໍ່ມີແຕ່ເຮົາ

53. ໃຜຢາກດັງ

54. ກ່ອນຈາກ

55. ໂຊກສະຕາ

56. ສາວງາມລັຕະນະ

57. ດວງຕາ

58. ໄດໂນເສົາເກມ

59. ແຮງຮັກແຮງຮຽນ

60. ນ້ຳໃຈນ້ຳປະປາ

61. ຊົມເຊີຍກອງປະຊຸມພັກ ກ\ຊ ພາຍໃນ

ຮຽບຮຽງ: ກົມສິລະປະກຳ

ລວບລວມບົດເພງ: ນ. ພອນສະຫວັນ ສຸວັນນະວົງ

# ເພງຊາດລາວ

✍ ສີຊະນະ ສີສານ

ທຳນອງ: ດຣ. ທອງດີ ສູນທອນວິຈິດ

✡ ຊາດລາວຕັ້ງແຕ່ໃດມາ ລາວທຸກຖ້ວນໜ້າເຊີດຊູສຸດໃຈ
ຮ່ວມແຮງຮ່ວມຈິດຮ່ວມໃຈ ສາມັກຄີກັນເປັນກຳລັງດຽວ
ເດັດດ່ຽວພ້ອມກັນກ້າວໜ້າ ບູຊາຊູກຽດຂອງລາວ
ສົ່ງເສີມໃຊ້ສິດເປັນເຈົ້າ ລາວທຸກຊົນເຜົ່າສະເໝີພາບກັນ

✡ ບໍ່ໃຫ້ພວກຈັກກະພັດ ແລະພວກຂາຍຊາດເຂົ້າມາລົບກວນ
ລາວທັງມວນຊູເອກະລາດ ອິດສາລະພາບຂອງຊາດລາວໄວ້
ຕັດສິນໃຈສູ້ຊີງເອົາໄຊ ພາຊາດກ້າວໄປສູ່ຄວາມວັດທະນາ

# ເຜົ່າລາວເອີຍ

✍ ສຸບັນ ສຸວັນນະວົງ

✡ ເຜົ່າລາວເອີຍ ຈົ່ງຮັກກັນ
ແພງພີ່ງພັນ ຄົນລາວອາດຫານເກັ່ງກ້າ
ຢູ່ປ່າຜາພູທົ່ງພຽງ ກໍ່ແມ່ນເຊື້ອຊາດລາວຂອງເຮົາ
ຮີບມາສາມັກຄີກັນເຂົ້າ ລາວເທີງລາວສູງລາວລຸ່ມ
ປຸ້ມລຸມກັນ ສ້າງສັນບ້ານເມືອງຂອງລາວ
( ເຮົາຄົນລາວ ບໍ່ແມ່ນໄທອື່ນ)

✡✡ ຊົນຊາດລາວ ດິນແດນລາວ
ຊາດລາວເຮົາ ໂຮມກັນຢ່າໄດ້ແຕກແຍກ
ຢ່າໄດ້ແຍກເຜົ່າພີ່ງພັນ ພວກຜີມານຈະຢຶດຄອງລາວ
ຫຼາຍປີທີ່ພວກເຮົາຕໍ່ສູ້ ກອບກູ້ເອົາເອກກະລາດ
ສັນຕິພາບ ມາໃຫ້ແຜ່ນດິນຣົ່ມເຢັນ
( ເຮົາຄົນລາວ ບໍ່ແມ່ນໄທອື່ນ )

✡✡✡ ມາຮີບມາ ພ້ອມກັນກ້າວເດີນ
ເດີນຮີບເດີນ ສ້າງສາຊາດລາວ
ເຜົ່າລາວເອີຍ ໄຊເຮົາ ຍິ່ງໃຫຍ່ດິນແດນເຮົາກວ້າງ
ຫວງແຫນ ເອົາໃວ້ເຖີດລາວ ( ຊໍ້າ )
ມາໂຮມກັນເຂົ້າ ທຸກເຜົ່າລາວເອີຍ
( ເຮົາຄົນລາວ ບໍ່ແມ່ນໄທອື່ນ )

# ພົບກັນໃນສັນຕິພາບ

✍ ສຸບັນ ສຸວັນນະວົງ

✡✡ ຈາກກັນໄປ ໃນວັນນັ້ນ
ວັນນີ້ ເຮົາພົບກັນໃໝ່
ພົບຢ່າງມີໄຊ ໃຕ້ບັນຍາກາດທີ່ສົດໃສ
ໃນດິນແດນຂອງລາວ ມີໄຊຍິ່ງໃຫຍ່ສັນຕິພາບຕ່າວມາ
ມາພົບໜ້າພໍ່ຕາ ພໍ່ແມ່ລຸງປ້າແສນສຸກສົມຫວັງ
✡ ເຮົາພົບກັນ ໃນວັນນີ້
ຍິ່ງມີ ຄວາມໝາຍຍິ່ງໃຫຍ່
ບົນເສັ້ນທາງໄປ ທີ່ລາວເຮົາໄດ້ ຮ່ວມໃຈ ກັນ
ທຸກຊົນຊາດຊົນເຜົ່າ ທົ່ງພຽງພູດອຍມີຈິດໃຈເບີກບານ
ສຸມທຸກວຽກທຸກງານ ພ້ອມກັນເສີມສ້າງບ້ານເມືອງຂອງລາວ
✡✡ ເວລາ ບໍ່ຫຼ້າບໍ່ສວາຍ
ສະພາບການ ສຸດແສນອຳນວຍ
ຈັບມືກັນ ຮ່ວມໃຈປອງດອງ
ສາມັກຄີປົກປ້ອງ ສັນຕິພາບໃຫ້ໝັ້ນຄົງ
( ໃຫ້ໝັ້ນຄົງ ໃຫ້ໝັ້ນຄົງ ຕະຫຼອດໄປ )

24 / VII



ພິທີມອບຄຸນງາມຄວາມດີໃຫ້ແກ່ນັກສະແດງ ກອງສິລະປະກອນສູນກາງທີ່ເມືອງວຽງໄຊ

# ເຮືອນອ້ອມຈອມດອຍ

✍ ສຸບັນ ສຸວັນນະວົງ

✡ ຢູ່ເຈັ້ຍເນີນເປີ້ນພູເຂົາ
ລາວສູງນີ້ໜາ
ສູງສະຫງ່າ
✡ ດຽວນີ້
ການນຳໄດ້
ຊາວພູດອຍ
ສາມັກຄີເດັດດ່ຽວ
ຕ້ານໝູ່ໂຈນ
✡ ສ້າງສາບ້ານເມືອງ
ພີ່ນ້ອງ
ໄດ້ຫ້າວຫັນ
ສຽງລຳ
ດັ່ງແຮງກວ່າ
✡✡ ມູນເຊື້ອ
ຄົນເກ່ງກ້າ
ເປັນແວ່ນແຍງ
ເຮົາແມ່ນຊົນຊາດລາວ
ເຮົາຮັກສາເອົາໄວ້
ຢ່າລືມໃລ

ພີ່ນອ້ງເຮົາ
ເຮືອນອ້ອມຈອມດອຍພູຜາ
ມີມາແຕ່ໄດໄດ
ໃບໜ້າອັນໃໝ່
ເປີດແຈ້ງແນວທາງ
ລົງມືດຳທຳນາ
ກິນກ່ຽວກັບ
ມານຮ້າຍ ບໍ່ໄລລາ
ບໍ່ໄລລາສ້າງສາບ້ານເມືອງ
ຢູ່ເຈັ້ຍພູເຂົາ
ເບີກບານອຸລາ
ສຽງຮ້ອງກ້ອງຜາ
ສຽງຍິນຢູ່ເວຫາ
ລາວສູງມີມາ
ເຈົ້າຟ້າປັດໃຈ
ໃຫ້ພວກເຮົາສືບຕໍ່
ແຜ່ນດິນລາວ
ຢ່າລືມໄລ ປະເທດຊາດຂອງເຮົາ
ປະເທດຊາດເຮົາເອີຍ ...

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ